ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກຜັກກາດຕົ້ນໝີ

(ສະບັບທົດລອງ)



ຂຽນໂດຍ: ທ່ານນາງ ກັນທິດາ ມະໂນສິນ
ຂໍ້ມູນຈາກ: ບ້ານຖິ່ນ ເມືອງ ໄຊຍະບູລີ ແຂວງ ໄຊຍະບູລີ
ປີ 2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

## ຊື່ ແລະປະຫວັດຂອງຜູ້ຂຽນ



ຊື່: ທ່ານນາງ ກັນທິດາ   ນາມສະກຸນ: ມະໂນສິນ

ອາຍຸ: 22 ປີ   ອາຊີບ: ປະຊາຊົນ

### ເຫດຜົນຂອງການຂຽນປື້ມຫົວນີ້:

ຂ້າພະເຈົ້າຂຽນປື້ມຫົວນີ້ເພື່ອໃຫ້ລູກຫລານທີ່ເກີດໃໝ່ໃຫຍ່ລຸນຮູ້ຈັກການປູກຜັກກາດຕົນໝີໃຫ້ດີຂຶ້ນ ແລະເຝິກແອບເຂົ້າໃນຊີວິດປະຈຳວັນເພື່ອອະນຸລັກຮັກສາພືດຜັກພື້ນບ້ານ ເພາະວ່າປະຊາຊົນລາວເປັນຄົນດຸໝັ່ນຂະຫຍັນພຽນ. ດັ່ງນັ້ນຈຶ່ງຢາກໃຫ້ນັກຮຽນທຸກຄົນຮັກສາມູນເຊື້ອອັນດີງາມໄວ້ໃຫ້ຢູ່ກັບຄົນລາວຕະຫລອດໄປ.

# ຄວາມຮູ້ພູມປັນຍາທ້ອງຖິ່ນ
# ການປູກຜັກກາດຕົນໝີ

ຮີບໂຮມ ແລະ ຈັດໜ້າໂດຍ: ນາງ ບຸນທີ ສີຫາລາດ
ແຕ້ມໂດຍ: ທ້າວ ຄຳຫລ້າ ພອນມະນີວົງ
ຜູ້ຮຽບຮຽງ: ອ.ຈ ໂພໄຊ ຈັນທະວົງສາ
ອ.ຈ ລັ່ງ ແສງດາລາ

ເຈົ້າຂອງ: ຫ້ອງການສຶກສາເມືອງໄຊຍະບູລີ ແຂວງ ໄຊຍະບູລີ
ແລະ ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີໄດ້ບັນຈຸເອົາເນື້ອໃນ, ຂັ້ນຕອນການປະຕິບັດຕ່າງໆລວມທັງຄຸນປະໂຫຍດຂອງການປູກຜັກກາດຕົນໝີທ້ອງຖິ່ນບ້ານ ຖິ່ນ. ເມືອງ ໄຊຍະບູລີ. ແຂວງ ໄຊຍະບູລີ ໂດຍແມ່ນຄູເຝິກຊຸມຊົນເປັນຜູ້ໃຫ້ຂໍ້ມູນ ແລະ ຂຽນດ້ວຍຕົນເອງ ໂດຍຜ່ານການຮັບຮອງ ແລະ ຮຽບຮຽງຈາກຫ້ອງການສຶກສາປະຈຳເມືອງ, ພະແນກສຶກສາປະຈຳແຂວງ, ສູນອົບຮົມຮ່ວມພັດທະນາ, ກົມພາລະ ແລະ ສິລະປະສຶກສາ (ກະຊວງສຶກສາທິການ).

ປຶ້ມເຫຼັ້ມນີ້ຄະນະຈັດທຳມີຈຸດປະສົງແນະນຳ ແລະຈັດທຳຂຶ້ນເພື່ອເປັນຄູ່ມື ແລະ ເປັນບ່ອນອີງໃຫ້ແກ່ຄູ-ອາຈານໃນການສິດສອນວິຊາພູມປັນຍາທ້ອງຖິ່ນ, ດັ່ງນັ້ນຄູຕ້ອງເລືອກຫົວຂໍ້ທີ່ເໝາະສົມກັບໄວອາຍຸຂອງເດັກໃນແຕ່ລະຂັ້ນຮຽນໂດຍອີງຕາມສະມັດຕະພາບຂອງບົດສອນເຊິ່ງໄດ້ລະບຸໄວ້ໃນແຜນການສອນປະຈຳປີ, ປະຈຳເດືອນ ແລະ ປະຈຳອາທິດ, ເຖິງຢ່າງໃດກໍຕາມຄູຕ້ອງໄດ້ເອົາໃສ່ຕື່ມໃນການເອົາຄວາມຮູ້ທ້ອງຖິ່ນເຂົ້າມາສິດສອນເພື່ອເຮັດໃຫ້ເນື້ອໃນຂອງຂະບວນການຮຽນຮູ້ຂອງເດັກນ້ອຍມີຄວາມສົມບູນ ແລະມີຄວາມສອດຄ່ອງກັບຄວາມເປັນຈິງຫຼາຍຂຶ້ນ.

ຄະນະຈັດທຳປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ຄິດວ່າເນື້ອໃນຍັງມີຫຼາຍອັນທີ່ຍັງບໍ່ທັນສົມບູນ, ຄົບຖ້ວນ ແລະ ຂາດຫາຍໄປພວກເຮົາຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກຄູ-ອາຈານຜູ້ທີ່ຊົມໃຊ້ທຸກທ່ານ, ພວກເຮົາພ້ອມແລ້ວທີ່ຈະປັບປຸງປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໃຫ້ສົມບູນຂຶ້ນ ແລະຂໍຂອບໃຈລ່ວງໜ້າກ່ຽວກັບຄຳຕຳນິຕິຊົມຂອງທ່ານທີ່ມີຕໍ່ພວກເຮົາ.

ຄະນະຈັດທຳ

**<u>ເກມ</u>** : ແຂ່ງຂັນກັນເວົ້າຊື່ຜັກ

ຜູ້ນຳພາຈະຈັບນັກຮຽນໃຫ້ເປັນຄູ່ປິ່ນໜ້າເຂົ້າຫາກັນແລ້ວຕີຊຸ້ມກັນຖ້າໃຜຊະນະແມ່ນຈະໄດ້ເວົ້າຊື່ຜັກກ່ອນ (ຜັກພື້ນບ້ານຂອງລາວເຮົາ), ຖ້າຜູ້ໃດບໍ່ຊະນະຈະໄດ້ເວົ້າຕາມຫລັງ ແລະບໍ່ໃຫ້ເວົ້າຊ້ຳກັນຖ້າໃຜເວົ້າຊ້ຳຈະໄດ້ອອກມາຮ້ອງເຕັ້ນທ່າກົບໃຫ້ໝູ່ເບິ່ງ.

PDF created with pdfFactory Pro trial version www.pdffactory.com

## ລຳຜູ້ໄທ: ເຊີນຊວນ

ມາເດີ ມາເດີ ພວກພີ່ນ້ອງ
ພວກເຮົາປອງດອງ ພ້ອມກັນສ້າງສວນ
ເຮົາຈະຂໍເຊີນຊວນ ມາຮ່ວມແຮງຮ່ວມໃຈ
ພັດທະນາບ້ານໃຫ້ ຈະເລີນຮຸ່ງເຮືອງ ທ່ານເອີຍ

**ບົດໂຈດ:**

ຜັກກາດຕີນໝີ ຫລືຜັກກາດກ້ານລ້າວ 1 ກິໂລມີຈຳນວນ 30 ຕົ້ນ, ຖ້າວ່າ 4 ກິໂລຈະມີຜັກກາດກ້ານລ້າວຈັກຕົ້ນ ?

**ຄຳຕອບ:**

- ຜັກກາດ 1 ກິໂລ ມີ 30 ຕົ້ນ
- ຖ້າມີ 4 ກິໂລຈະມີເທົ່າສໃດຕົ້ນ ?
- ວາງ ກ ແມ່ນຄ່າຂອງຕົ້ນຜັກກາດ

→ ກ = 30 x 4 = 120 ຕົ້ນ ຜັກກາດກ້ານລ້າວຈະມີ 120 ຕົ້ນ

## ຄວາມເປັນມາຂອງການປູກຜັກກາດຕີນໝີ ຫຼືຜັກກາດກ້ານລ້າວ

ແຕ່ກີ້ແຕ່ກ່ອນປູ່ຍາຕາຍາຍຂອງພວກເຮົາແມ່ນໄດ້ຕິດພັນກັບການອອກແຮງງານປູກຝັງ ແລະລ້ຽງສັດເປັນຕົ້ນຕໍແມ່ນເຮັດສວນຜັກກາດຕີນໝີ ຫລື ຜັກກາດກ້ານລ້າວເພາະສາມາດເຮັດອາຫານໄດ້ຫຼາຍຢ່າງ ແລະເຮັດໄວ້ກິນດົນກໍໄດ້.

PDF created with pdfFactory Pro trial version www.pdffactory.com

## ອຸປະກອນ: (ແຕ້ມຮູບໃສ່)

ພ້າ



ສຽມ



ຈົກ



## ເຊີ້ງ: ການສືບທອດ

| | |
|---|---|
| ໂຮ....... | ຮິວ...... |
| ຮີບມາເຮົາມາ | ມາປູກຜັກກາດ |
| ເຮົາຂໍປະກາດ | ນ້ອຍໃຫຍ່ຍິງຊາຍ |
| ຜູ້ຄົນທັງຫລາຍ | ຈົ່ງຈຳເອົາໄວ້ |
| ເພາະເຮົານັ້ນໄດ້ | ສືບທອດກັນມາ (*2) |
| ເຮົາພາກັນມາ | ຮັກສາເອົາໄວ້ |
| ໃຫ້ເອົາໃຈໃສ່ | ໃນການປູກຜັກ |
| ຈົ່ງບົວລະບັດ | ຮັກສາຜັກໄວ້ |
| ໃຫ້ຄົນຮຸ່ນຫລັງໄດ້ | ທຳມາຫາກິນ |
| ໂຮ....... | ຮິວ.......... |

## ເພງ: ຊ່ວຍກັນປູກຜັກ

| | |
|---|---|
| ສວນຄົວບ້ານນ້ອງ | ມັນງາມອີ່ຫຼີ |
| ຍ້ອນວ່າເຮົາມີ | ວິທີການປູກແບບໃໝ່ໆ |
| ປູກໃສກໍໄດ້ | ບໍ່ເລືອກທີ່ດິນ |
| ປູກແລ້ວໄດ້ກິນ | ເຫລືອກິນກໍເອົາໄປຂາຍ (*2) |

PDF created with pdfFactory Pro trial version www.pdffactory.com

## ຫລັກການສຳຄັນຂອງການເລືອກແນວພັນ:

ຕ້ອງເລືອກເອົາຕົ້ນທີ່ແຂງແຮງສົມບູນ, ແນວພັນຕ້ອງເປັນແກ່ນທີ່ໃຫຍ່ ແລະຕາກແດດໃຫ້ແຫ້ງ.

## ກາບ: ການປູກຜັກ

ຄົນບ້ານເຮົາ ມັກການປູກຝັງ
ມີພ້ອມທັງ ພືດຜັກຕ່າງໆ
ບໍ່ໃຫ້ຫວ່າງ ທັງແລ້ງ ແລະຝົນ
ບໍ່ກັງວົນ ແນວຜັກສວນຄົວ
ໃນຄອບຄົວ ອອກແຮງພ້ອມພ່ຳ
ເຊົ້າແລະຄ່ຳ ມີແຮງດຸໝັ່ນ
ເຮົາຂະຫຍັນ ປູກຜັກໄວ້ກິນ

ຄຸ, ບົວ



ເບ້ຍຜັກກາດ, ແກ່ນຜັກກາດ



ຝຸ່ນຂີ້ໄກ່, ຝຸ່ນຂີ້ໝູ



PDF created with pdfFactory Pro trial version www.pdffactory.com

## ວິທີປູກແລະການບົວລະບັດ:

ການກະກຽມດິນຂັ້ນຕອນທຳອິດແມ່ນຂຸດໜານຕາກແດດໄວ້ປະມານ 1-2 ອາທິດເພື່ອເຮັດໃຫ້ສານເຄມີ ຫລືສານພິດທີ່ປົນເຈືອຢູ່ກັບດິນໃຫ້ລະເຫີຍອອກໝົດເສຍກ່ອນ.



ຈາກນັ້ນກໍລົງມືແປງໜານ ແລະທັບດິນໃຫ້ມຸ່ນແລ້ວຖູນດິນຂຶ້ນໃຫ້ລະອຽດ. ຫົດນ້ຳໃສ່ໃຫ້ປຽກດີແລ້ວເອົາຝຸ່ນມາໂຮຍໃສ່ ແລະນຳເບ້ຍຜັກທີ່ເຮົາກຽມໄວ້ນັ້ນມາປູກເລີຍ.



ການປູກແມ່ນປູກຕາມລວງກວ້າງປູກເປັນ 4 ແຖວຕໍ່ໜານ ແຕ່ລະແຖວຫ່າງກັນປະມານ 15 ຊມ ຫລືອີງຕາມການຂຸດໜານໃຫ້ສະໝ່ຳສະເໝີກັນໄປ



ຈາກນັ້ນເຮົາກໍຕິດຕາມເບິ່ງວ່າຜັກທີ່ປູກແຕ່ລະມື້ນັ້ນເຮົາຕ້ອງໃສ່ຝຸ່ນ, ຫົດນ້ຳ, ຖູນດິນເພື່ອບໍ່ໃຫ້ດິນແໜ້ນ, ຖ້າດິນແໜ້ນຈະເຮັດໃຫ້ຜັກທີ່ປູກນັ້ນດູດນ້ຳບໍ່ໄດ້ເຕັມທີ ແລະຄວນກຳຈັດ ຫລືຂ້າສັດຕູພືດໄປນຳພ້ອມທັງຫຼົກຫຍ້າທີ່ເກີດຢູ່ໃນອອ້ມແອ້ມໜານຜັກນັ້ນໄປພ້ອມ.

## ຖຸນປະໂຫຍດ:

- ການປູກຜັກກາດສາມາດນຳໃຊ້ເປັນອາຊີບໄດ້ເພາະວ່າຜັກກາດຄວາມຄຳຄັນໃຫ້ແກ່ພວກເຮົາໃນການບໍລິໂພກແລະອຸປະໂພກ.
- ຜັກກາດຕິນໝີສາມາດເກັບຮັກສາໄວ້ກິນດົນໄດ້ເຊັ່ນ: ການເຮັດນ້ຳຜັກ, ຜັກກາດດອງ, ຜັກກາດແຫ່ວ, ສົ້ມຜັກາດແລະອື່ນໆ.

PDF created with pdfFactory Pro trial version www.pdffactory.com